# ໝາກກ້ຽງພື້ນເມືອງ

## ໃນແຂວງ ຊຽງຂວາງ

*ໝາກກ້ຽງພື້ນເມືອງ ແມ່ນມີຄວາມຕ້ອງການສູງ ຍ້ອນວ່າມັນເປັນທີ່ນິຍົມຊົມຊອບຂອງຜູ້ບໍລິໂພກທັງຫລາຍເພາະວ່າມັນມີລົດຊາດສົ້ມຫວານປົນກັນ. ມີໂອກາດໃນການຜັນຂະຫຍາຍຜົນປະໂຫຍດເພື່ອຕອບສະໜອງຄວາມຕ້ອງການດັ່ງກ່າວ ໂດຍການແນະນໍາວິທີການປູກໃຫ້ມີຄຸນນະພາບສູງຂຶ້ນ, ປັບປຸງການຄຸ້ມຄອງບົວລະບັດຮັກສາ, ສຸມໃສ່ພັດທະນາທາງດ້ານການຕະຫລາດ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຊາວສວນປູກໝາກກ້ຽງ.*



## ການຜະລິດ:

- ໝາກກ້ຽງພື້ນເມືອງມີ 2 ສາຍພັນທີ່ຕ້ອງການຢູ່ໃນຕະຫລາດ ຄື: ໝາກກ້ຽງຫົວຈຸກ ແລະ ໝາກກ້ຽງເປືອກບາງ.
- ມີ 4 ເມືອງທີ່ເຮັດການປູກໝາກກ້ຽງພື້ນເມືອງ (ເມືອງຜາໄຊ, ເມືອງພູກູດ, ເມືອງຄູນ ແລະ ເມືອງໝອກ).
- ການຜະລິດໝາກກ້ຽງແມ່ນຍັງມີຂໍ້ຈໍາກັດຢູ່ພຽງແຕ່ໃນ 15 ບ້ານ, 142 ຄອບຄົວ ແລະ ໃນເນື້ອທີ່ 79 ເຮັກຕາ.
- ຜົນຜະລິດໃນແຕ່ລະປີ ໄດ້ປະມານ 121.5 ໂຕນ.
- ປະຈຸບັນມີສວນກ້າເບ້ຍໝາກກ້ຽງ ທີ່ເປັນຂອງເອກະຊົນຢູ່ 6 ແຫ່ງ ທີ່ຜະລິດເບ້ຍໝາກກ້ຽງຂາຍໃຫ້ປະຊາຊົນປູກ.
- ການຜະລິດ ແລະ ຄຸນນະພາບໝາກກ້ຽງ ຍັງມີຂໍ້ຈໍາກັດ ຍ້ອນຕົ້ນໝາກກ້ຽງບໍ່ມີຄຸນນະພາບ, ຂາດການຄຸ້ມຄອງທີ່ດີ, ມີພະຍາດ, ແມງໄມ້, ຂາດຝຸ່ນ ແລະ ດ້ານຊົນລະປະທານ.



## ການຕະຫລາດ:

- ຜົນຜະລິດແມ່ນໄດ້ຂາຍອອກຈາກສວນໂດຍກົງໃຫ້ແກ່ຜູ້ເກັບຊື້ ແລະ ຂາຍຕາມແຄມທາງ 5 ຈຸດ.
- ໝາກກ້ຽງແມ່ນມີຂາຍຢູ່ໃນຕະຫລາດຂອງເມືອງແລະແຂວງໂດຍພໍ່ຄ້າທີ່ໄດ້ເກັບຊື້ເອົາມາຈາກສວນ .
- ລາຄາແມ່ນບໍ່ແນ່ນອນຍ້ອນວ່າຜູ້ຜະລິດຍັງບໍ່ທັນມີການຮ່ວມມືດ້ານການຕະຫລາດທີ່ດີເທື່ອ.
- ພະແນກ, ຫ້ອງການກະສິກໍາ ແລະ ປ່າໄມ້ ໄດ້ໃຫ້ການຊ່ວຍເຫລືອດ້ານການຕະຫລາດໃຫ້ແກ່ຊາວສວນ.



## ໂອກາດ:

- ຕ້ອງໄດ້ປັບປຸງການຄຸ້ມຄອງບົວລະບັດຮັກສາສວນໝາກກ້ຽງ ແລະ ເບ້ຍພັນໃຫ້ມີຄຸນນະພາບດີ.
- ຍົກສູງຄວາມຮູ້ ແລະ ການນໍາໃຊ້ວິທີການຜະລິດແບບອິນຊີ ລວມທັງ ການສົ່ງເສີມວິທີການນໍາໃຊ້ແມງໄມ້ທີ່ເປັນປະໂຫຍດ.
- ປັບປຸງຍຸດທະສາດການຕະຫລາດ ໂດຍການໂຄສະນາແນະນໍາ, ນໍາສະເໜີ ແລະ ການຮ່ວມ ມືກັນຂອງຊາວກະສິກອນ.
- ຂະຫຍາຍການປູກໝາກກ້ຽງແນວພັນອື່ນທີ່ເປັນທ່າແຮງໃສ່ນໍາຕື່ມ.



Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC
NAFRI
TABI
The Agro-Biodiversity Initiative (TABI)